S D
C S

# SAN DIEGO CITY SCHOOLS

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

Phone: (619) 725-5578
Fax: (619) 725-5576

Communications Department

# ຄຳຕອບແລະຄຳຖາມທີ່ນັກຮຽນປະຖົມຖາມເລື້ອຍໆກ່ຽວກັບ ການສັ່ງຢຸດຊົ່ວຄາວ ແລະ ການໄລ່ອອກໂຮງຮຽນ

## ໂຮງຮຽນສາມາດຊ່ວຍໃຫ້ຂ້ອຍສຳເຣັດບົດຮຽນໄດ້ແນວໃດ ເມື່ອຂ້ອຍຖືກສັ່ງຢຸດຊົ່ວຄາວ?

ພໍ່ແມ່ຂອງເດັກທີ່ຖືກສັ່ງຢຸດໂຮງຮຽນຊົ່ວຄາວ ອາດສາມາດຂໍຮ້ອງເອົາບົດຮຽນ ແລະການສອບເສັງໃຫ້ເດັກລະຍະທີ່ຖືກສັ່ງຢຸດຢູ່ບ້ານ. ຄຣູປະຈຳຫ້ອງອາດຈະຮຽກຮ້ອງໃຫ້ນັກຮຽນຜູ້ນັ້ນສຳເຣັດບົດຮຽນ ແລະຂໍ້ສອບເສັງຕ່າງໆໃນລະຍະເວລາທີ່ຖືກສັ່ງຢຸດນັ້ນ. ພວກນັກຮຽນຄວນກວດເບິ່ງໂຄງການບຳຣຸງຕ່າງໆກັບຄຣູແນະນຳ. ລາຍລະລາຍເພີ້ມນັ້ນ, ສາມາດກວດເບິ່ງໃນກົດລະບຽບສູນກາງສຶກສາ ເລກທີ **#6290**, ຊຶ່ງມີໄວ້ຢູ່ໃນຕາໜ່າງຂ່າວສູນກາງສຶກສາທີ່ http://prod031.sandi.net/procedures/pdf/pp6290.pdf.

## ການສັ່ງຢຸດຊົ່ວຄາວ–ຢູ່ກັບໂຮງຮຽນ ແລະ –ຢູ່ນອກໂຮງຮຽນແຕກຕ່າງກັນແນວໃດ?

ການສັ່ງຢຸດຊົ່ວຄາວ–ຢູ່ກັບໂຮງຮຽນໝາຍຄວາມວ່າ ນັກຮຽນຖືກສົ່ງໄປບ່ອນນຶ່ງສະເພາະຢູ່ໃນເຂດໂຮງຮຽນທີ່ຖືກດູແລກຳກັບໂດຍພະນັກງານໂຮງຮຽນ. ການສັ່ງຢຸດຊົ່ວຄາວ–ຢູ່ກັບໂຮງຮຽນ ຈະບໍ່ໄດ້ຈົດເຂົ້າໃນປຶ້ມບັນທຶກຖາວອນຂອງນັກຮຽນ, ແຕ່ອາດຈະເກັບໄວ້ໃນປຶ້ມບັນທຶກທົ່ວໄປຂອງນັກຮຽນ ເພື່ອເປັນຫລັກຖານ ແລະ ອາດນຳໃຊ້ເປັນການລົງໂທດສຳລອງ ກ່ອນຈະເຖິງຂັ້ນການສັ່ງຢຸດຊົ່ວຄາວ–ນອກໂຮງຮຽນ, ຊຶ່ງແມ່ນການສັ່ງຢຸດຊົ່ວຄາວເປັນທາງການ. ການສັ່ງຢຸດຊົ່ວຄາວ–ນອກໂຮງຮຽນ, ຫລື ສັ່ງຢຸດຊົ່ວຄາວເປັນທາງການ ໝາຍຄວາມວ່າ ນັກຮຽນຈະບໍ່ອະນຸຍາດໃຫ້ເຂົ້າມາໃນເຂດໂຮງຮຽນລະຍະທີ່ຖືກສັ່ງຢຸດຊົ່ວຄາວນັ້ນ ນອກຈາກມີປະຊຸມເປັນທາງການກ່ຽວຂ້ອງກັບເຣື່ອງສັ່ງຢຸດຊົ່ວຄາວຂອງນັກຮຽນ.

## ຄວາມຜິດແນວໃດເປັນຜົນໃຫ້ຖືກໄລ່ອອກໂຮງຮຽນ?

ຄວາມຜິດທຸກໆຢ່າງທີ່ກ່ຽວກັບອາວຸດປືນ, ແນມີດ, ລູກຣະເບີດ, ຈູ່ໂຈມທຳຮ້າຍ/ທຸບຕີເພື່ອທາງເພດ, ແລະ ການຂາຍຢາເສບຕິດໃຫ້ໂທດທີ່ຫລວງຄວບຄຸມ ແລະ ຫວງຫ້າມນັ້ນຈະຖືກພິຈາຣະນາໃຫ້ໄລ່ອອກໂຮງຮຽນຢູ່ສເມີ.

## ນະໂຍບາຍການບໍ່ໂຍະຍານນັ້ນແມ່ນຫຍັງ?

ນະໂຍບາຍການບໍ່ໂຍະຍານນັ້ນສຳຫລັບພວກນັກຮຽນມັທຍົມ (ພາກກາງ, ມັທຍົມພາກຕົ້ນ ແລະ ພາກປາຍ) ແລະ ວາງຄວາມຜິດຕ່າງໆໄວ້ທີ່ຈະມີຜົນເຖິງຂັ້ນສັ່ງຢຸດຊົ່ວຄາວ ແລະ ພິຈາຣະນາໄລ່ອອກໂຮງຮຽນ. ເຖິງວ່ານະໂຍບາຍການບໍ່ໂຍະຍານບາງຢ່າງໃຊ້ສຳຫລັບພວກນັກຮຽນປະຖົມ, ແຕ່ນະໂຍບາຍນີ້ບໍ່ໄດ້ຈັດຂຶ້ນສຳຫລັບນັກຮຽນປະຖົມ.

## ການສັບປ່ຽນແທນການດຳເນີນໄລ່ອອກໂຮງຮຽນນັ້ນແມ່ນຫຍັງ?

ສຳຫລັບການກະທຳຜິດຮ້າຍແຮງທີ່ບໍ່ຮຽກຮ້ອງໃຫ້ໄລ່ອອກໂຮງຮຽນນັ້ນ, ຫົວໜ້າໝວດໂຮງຮຽນອາຈະເລືອກເອົາການເຂົ້າແຊກຊ່ວຍຂອງຄະນະສອບຣະບຽບວິນັຍ ເພື່ອເຂົ້າແຊກຊ່ວຍແທນທີ່ຈະໄລ່ອອກໂຮງຮຽນ ສຳຫລັບພວກນັກຮຽນປະຖົມ. ພວກນັກຮຽນທີ່ກະທຳຜິດໃນຂັ້ນນີ້ ຈະຖືກສັ່ງຢຸດຊົ່ວຄາວຫ້າ (5) ວັນ ແລະ ຮຽກຮ້ອງໃຫ້ເຂົ້າຮວມກິຈກັມຕ່າງໆທີ່ຈັດໄວ້ ເພື່ອເນັ້ນໜັກໃສ່ການປະພຶດອັນທີ່ບໍ່ຖືກຕ້ອງເໝາະສົມນັ້ນ.

## ການ "ຈູ່ໂຈມທຳລາຍ" ("assult") ນີ້ແປວ່າແນວໃດ?

ການ "ຈູ່ໂຈມທຳລາຍ" ມີຄວາມໝາຍວ່າ, "ການພຍາຍາມທຳຜິດກົດໝາຍ, ບາງຢ່າງທີ່ຖືເປັນການກະທຳ, ການທຳບາດເຈັບຮ້າຍແຮງແກ່ຄົນອື່ນ." ນະໂຍບາຍການຮັກສາລະບຽບວິນັຍຂອງສູນກາງສຶກສາ, ການ "ຈູ່ໂຈມທຳລາຍ ແລະ ການທຸບຕີຮ່າງກາຍທີ່ຜິດກົດໝາຍ" ຮວມທັງປະເພດຂາບກໍ່ເຫດ, ພຍາຍາມກໍ່ເຫດ, ຫລື ຂູ່ຈະເຣັດໃຫ້ຮ່າງກາຍບາດເຈັບ; ໃຊ້ເຣື່ອແຮງ ແລະ ຄວາມຮຸນແຮງ ກັບຄົນອື່ນ, ແລະ ການຈູ່ໂຈມທຳຮ້າຍ ແລະ ທຸບຕີເພື່ອການເພດ, ນອກຈາກເປັນການປ້ອງກັນຕົວເທົ່ານັ້ນ.

## "ຄວາມຫຍາບຄາຍ" ("defiance") ນີ້ແປວ່າແນວໃດ?

ຄວາມຫຍາບຄາຍໝາຍຄວາມວ່າ "ຄວາມຕັ້ງໃຈຝ່າຝືນທ້າທາຍເຈົ້າໜ້າທີ່ປົກຄອງໂຮງຮຽນ", ຮວມທັງຫົວໜ້າດູແລ, ນາຍຄຣູ, ພະນັກງານໂຮງຮຽນ ແລະ ພະນັກງານອື່ນໆຂອງໂຮງຮຽນທີ່ກຳລັງເຣັດໜ້າທີ່ວຽກງານຂອງເຂົາເຈົ້າຢູ່ນັ້ນ. ອັນນີ້ຮວມທັງການຂັດຂວາງທ້າທາຍນາຍຄຣູ ຫລື ລະເມີດລະບຽບວິນັຍຂອງຫ້ອງຮຽນ. ການໃຊ້ຄວາມຫຍາບຄາຍນີ້ອາດເປັນຜົນໃຫ້ເຖິງຂັ້ນສັ່ງຢຸດຊົ່ວຄາວກໍ່ໄດ້.

## ຂ້ອຍຈະເຣັດແນວໃດ ເມື່ອຮູ້ສຶກວ່າເຈົ້າໜ້າທີ່ໂຮງຮຽນບໍ່ມີຄວາມຍຸຕິທັມກັບຂ້ອຍ?

ການຕຳນິຟ້ອງຮ້ອງພະນັກງານນັ້ນຕ້ອງໄດ້ນຳຂຶ້ນໄປຫາຫົວໜ້າໝວດໂຮງຮຽນ. ຖ້າວ່າບັນຫາບໍ່ສາມາດແກ້ໄຂໄດ້ໃນຂັ້ນໂຮງຮຽນ, ຕ້ອງທຳການຟ້ອງຮ້ອງເປັນທາງການ ກັບຫ້ອງການສະພາບໍຣິການ ແລະ ການຊ່ວຍເຫລືອພໍ່ແມ່ໂດຍໂທຣະສັບໄປທີ່ (619) 725–5525 ຫລື ທີ່ສູນກາງສຶກສາ Room 2153 Eugene Brucker Education Center, 4100 Normal Street, San Diego, CA92103. ທ່ານຍັງສາມາດຮຽນຮູ້ເພີ່ມເຕີມທີ່ http://www.sandi.net/parents/support/support.html.

*(ມີຕໍ່)*

# ຄຳຕອບແລະຄຳຖາມທີ່ນັກຮຽນປະຖົມຖາມເລື້ອຍໆກ່ຽວກັບ ການສັ່ງຢຸດຊົ່ວຄາວ ແລະ ການໄລ່ອອກໂຮງຮຽນ

*(ຕໍ່)*

## ຫລັງຈາກຖືກໄລ່ອອກໂຮງຮຽນແລ້ວ ຂ້ອຍຈະກັບເຂົ້າໂຮງຮຽນໄດ້ແນວໃດ?

ຂຶ້ນກັບກໍຣະນີການໄລ່ອອກໂຮງຮຽນນັ້ນ, ສະພາສູນກາງສຶກສາສາມາດຈັດໂຮງຮຽນ, ຫ້ອງຮຽນ ຫລື ໂຄງການຮຽນໃຫ້ແກ່ນັກຮຽນ, ອີງຕາມກົດໝາຍ, ທີ່ຖືວ່າເຫມາະສົມ, ແລະ ພ້ອມທັງສະພາສູນກາງກໍໄດ້ແນະນຳໃຫ້ມີແຜນການຟື້ນຕົວສຳຫລັບນັກຮຽນ. ແຜນຟື້ນຕົວນີ້ອາດຮວມມີທັງການທົບທວນ ແລະ ການອົບຮົມເປັນລະຍະໆໄປ. ເມື່ອປະຕິບັດສຳເຣັດຕາມແຜນການຟື້ນຕົວແລ້ວ, ຫ້ອງການສັບຊ້ອນ ແລະ ອຸທອນຂອງສູນກາງສຶກສາກໍຈະໄດ້ສັບຊ້ອນໃສ່ບ່ອນເຫມາະສົມເພື່ອໃຫ້ນັກຮຽນກັບເຂົ້າໂຮງຮຽນອີກ. ຖ້າປະຕິບັດແຜນຟື້ນຕົວບໍ່ສຳເຣັດນັ້ນ, ສະພາສູນກາງສຶກສາອາດຈະປະຕິເສດ ໃຫ້ກັບເຂົ້າໂຮງຮຽນໃນໂຄງການຮຽນທັມດາຂອງໂຮງຮຽນສູນກາງສຶກສາ ແລະ ຈະຈັດສົ່ງນັກຮຽນໄປໂຮງຮຽນສານເຍົາວະຊົນຈົນກວ່ານັກຮຽນປະຕິບັດແຜນຟື້ນຕົວໄດ້ສຳເຣັດ ແລ້ວນັກຮຽນຈຶ່ງຈະໄດ້ກັບເຂົ້າມາຮຽນໃນໂຮງຮຽນທັມດາອີກ.

## ນາຍຄຣູຈະສາມາດບັງຄັບໃຫ້ພໍ່ແມ່ຂອງຂ້ອຍເຂົ້າມາປະຊຸມກ່ຽວກັບການສັ່ງຢຸດຊົ່ວຄາວໃນໂຮງຮຽນບໍ?

ມີການແນະນຳຢ່າງແຂງແຮງໃຫ້ພໍ່ແມ່ມາສັງເກດເບິ່ງເດັກຂອງເຂົາເຈົ້າ ຫລື ມາປະຊຸມຢູ່ໂຮງຮຽນ, ແຕ່ບໍ່ມີໃຜສາມາດບັງຄັບພໍ່ແມ່ໄດ້. ນັກຮຽນບໍ່ສາມາດປະຕິເສດ ຫລື ເລື່ອນການກັບເຂົ້າຮຽນຂອງການສັ່ງຢຸດຊົ່ວຄາວ ຫລື ການລົງໂທດອື່ນໆຍ້ອນພໍ່ແມ່ບໍ່ໄດ້ຕິດຕໍ່ໄປຫາໂຮງຮຽນ.

## ການຖືກໄລ່ອອກໂຮງຮຽນ ຈະເປັນເວລາດົນປານໃດ?

ຂຶ້ນກັບກໍຣະນີຂອງຄວາມຜິດ, ຄຳສັ່ງການໄລ່ອອກໂຮງຮຽນນັ້ນຈະບໍ່ຍາວກວ່ານຶ່ງປີ ນັບແຕ່ວັນໄລ່ອອກໂຮງຮຽນໄປ. ອັນນີ້ບໍ່ຈຳເປັນຕ້ອງນັບແຕ່ວັນຂອງການກະທຳຜິດ, ຊຶ່ງອາດຈະໄວກວ່ານີ້ຫລາຍ. ການກັບເຂົ້າໃຫມ່ນີ້ຈະເຣີ່ມໃນວັນເຣີ່ມຕົ້ນເທີມຮຽນໃຫມ່ເທົ່ານັ້ນ.

## ຂ້ອຍຈະເຮັດແນວໃດ ເມື່ອຂ້ອຍຮູ້ສຶກວ່າຜິດຕໍ່ການສັ່ງຢຸດຊົ່ວຄາວຢ່າງຮ້າຍແຮງ?

ຖ້ານັກຮຽນຮູ້ສຶກວ່າຜິດຕໍ່ລະບຽບການສັ່ງຢຸດຊົ່ວຄາວຮ້າຍແຮງນັ້ນ, ເຂົາເຈົ້າຕ້ອງໄດ້ປະຕິບັດຕາມລະບຽບນັ້ນ, ແຕ່ກໍສາມາດຂໍອຸທອນຕໍ່ການສັ່ງຢຸດຊົ່ວຄາວນັ້ນ, ຖ້າອຸທອນໄດ້, ຈະມີຜົນລົບລ້າງການສັ່ງຢຸດຊົ່ວຄາວອອກຈາກປຶ້ມບັນທຶກຂອງເຂົາເຈົ້າ. ບັນຊີກວດເບິ່ງການອຸທອນຂອງການສັ່ງຢຸດຊົ່ວຄາວນັ້ນມີໄວ້ໃຫ້ໂດຍໂທຣະສັບຫາຫ້ອງການສັບຊ້ອນ ແລະ ອຸທອນ (619) 725-5660, ຫລື ສາມາດພິມເອົາໄດ້ທີ່ http://www.sandi.net/depts/placement_appeal/suspension_appeal.pdf.

## ຖ້າຖືກສັ່ງຢຸດຊົ່ວຄາວນັ້ນ, ຂ້ອຍສາມາດກັບໄປໂຮງຮຽນບໍ? ຖ້າກັບໄປຈະເປັນແນວໃດ?

ໃນລະຍະການສັ່ງຢຸດຊົ່ວຄາວເປັນທາງການ, (ການສັ່ງຢຸດຊົ່ວຄາວນອກ-ໂຮງຮຽນ), ນັກຮຽນບໍ່ອະນຸຍາດໃຫ້ເຂົ້າໄປໃນເຂດໂຮງຮຽນໃດໆໃນສູນກາງສຶກສາໃນລະຍະເວລາການສັ່ງຢຸດຊົ່ວຄາວ ນອກຈາກມີການປະຊຸມເປັນທາງການທີ່ກ່ຽວຂ້ອງກັບການສັ່ງຢຸດຊົ່ວຄາວຂອງເຂົາເຈົ້າ. ຖ້ານັກຮຽນເຂົ້າໄປໃນເຂດໂຮງຮຽນນັ້ນ, ທາງໂຮງຮຽນສາມາດໂທຣະສັບຫາຕຳຣວດໂຮງຮຽນ ແລະ ພໍ່ແມ່ນັກຮຽນເພື່ອເອົານັກຮຽນອອກຈາກໂຮງຮຽນ.

## ການສັ່ງຢຸດຊົ່ວຄາວ-ຢູ່ກັບໂຮງຮຽນ ແລະ -ຢູ່ນອກໂຮງຮຽນແຕກຕ່າງກັນແນວໃດ?

ການສັ່ງຢຸດຊົ່ວຄາວ-ຢູ່ນອກໂຮງຮຽນ, ຫລື ການສັ່ງຢຸດຊົ່ວຄາວເປັນທາງການ, ຫມາຍຄວາມວ່າ ນັກຮຽນຈະບໍ່ອະນຸຍາດໃຫ້ເຂົ້າມາໃນເຂດໂຮງຮຽນໃນລະຍະທີ່ຖືກສັ່ງຢຸດຊົ່ວຄາວນັ້ນ ນອກຈາກວ່າມີການປະຊຸມເປັນທາງການທີ່ກ່ຽວຂ້ອງກັບເຣື່ອງສັ່ງຢຸດຊົ່ວຄາວຂອງນັກຮຽນນັ້ນ.

ການສັ່ງຢຸດຊົ່ວຄາວ-ຢູ່ກັບໂຮງຮຽນນັ້ນ ປົກກະຕິແລ້ວນັກຮຽນຈະຖືກສົ່ງໄປບ່ອນນຶ່ງສະເພາະຢູ່ໃນເຂດໂຮງຮຽນທີ່ຖືກດູແລກຳກັບໂດຍພະນັກງານໂຮງຮຽນ. ການສັ່ງຢຸດຊົ່ວຄາວ-ຢູ່ກັບໂຮງຮຽນນີ້ ຈະບໍ່ໄດ້ຈົດເຂົ້າໃນປຶ້ມບັນທຶກຖາວອນຂອງນັກຮຽນ, ແຕ່ອາດຈະເກັບໄວ້ໃນປຶ້ມບັນທຶກທົ່ວໄປຂອງນັກຮຽນ ເພື່ອເປັນຫລັກຖານ ແລະ ອາດຈະໃຊ້ໃນການລົງໂທດສຳລອງ ກ່ອນຈະເຖິງຂັ້ນການສັ່ງຢຸດຊົ່ວຄາວເປັນທາງການ.

## ຍ້ອນເຫດການແນວໃດ ສູນກາງສຶກສາຈຶ່ງສາມາດສັ່ງຢຸດຊົ່ວຄາວ ແລະ ໄລ່ນັກຮຽນພິການອອກໂຮງຮຽນ, ເມື່ອໃດຈະມີແຜນການຮຽນສ່ວນບຸກຄົນ (IEP)?

ພື້ນຖານການພິຈາຣະນາສັ່ງຢຸດຊົ່ວຄາວ ຫລື ໄລ່ອອກໂຮງຮຽນນັ້ນຄືກັນກັບພວກນັກຮຽນທຸກຄົນ, ເຖິງວ່າເຂົາເຈົ້າມີເງື່ອນໄຂເຂົ້າຮັບໃນການຊ່ວຍເຫລືອຂອງກົດຫມາຍແຜນການຟື້ນຕົວ 504 ຫລື ການສຶກສາພິເສດ. ຢ່າງໃດກໍດີ, ເຖິງວ່ານັກຮຽນຜູ້ນັ້ນໄດ້ລົງທະບຽນເຂົ້າຮຽນໃນການສຶກສາພິເສດທີ່ຖືກກັບເງື່ອນໄຂການໄລ່ອອກ, ຫລື ການສັ່ງຢຸດຊົ່ວຄາວ ເກີນ 10 ວັນໄປນັ້ນ, ກົດຫມາຍຍັງໄດ້ສືບຕໍ່ຮຽກຮ້ອງໃຫ້ຊ່ວຍເຫລືອການສຶກສາສະທາຣະນະທີ່ເຫມາະສົມໂດຍບໍ່ໄລ່ຣາຄາ (ຟຣີ). ບໍ່ຄືກັນກັບການສຶກສາຂອງນັກຮຽນທັມດາ, ນັກຮຽນທີ່ຢູ່ໃນການສຶກສາພິເສດນີ້ຈະບໍ່ມີການຊຸ້ນສຸດຂອງການຊ່ວຍເຫລືອ, ແຕ່ອາດມີການປ່ຽນແປງຂອງການສັບຊ້ອນ ເພື່ອສັບປ່ຽນການຊ່ວຍເຫລືອ ຕາມຄວາມຮຽກຮ້ອງຂອງແຜນການຮຽນສ່ວນບຸກຄົນ (IEP) ຂອງນັກຮຽນ.

ເພື່ອສຶກສາເພີ້ມກ່ຽວກັບ ກົດຫມາຍການຟື້ນຕົວ ມາດຕຣາ 504 ນີ້, ຂໍໃຫ້ອ່ານຢູ່ທີ່ http://www.hhs.gov/ocr/504.html. ລາຍລະອຽດກ່ຽວກັບ ກົດຫມາຍຊ່ວຍເຫລືອການສຶກສາສະທາຣະນະທີ່ເຫມາະສົມໂດຍບໍ່ໄລ່ຣາຄາ (ຟຣີ) ນີ້ ມີໄວ້ຢູ່ໃນອິນເຕີເນດ ທີ່ http://www.ed.gov/about/offices/list/ocr/docs/edlite-/FAPE504.html.

*ພິມແຈກຢາຍໂດຍການຊ່ວຍເຫລືອຂອງມູນນິທິ Annie E. Casey Foundation*